

# ເກມກະຊິບໃຫ້ຈີ່

ນັກຮຽນ 10 ຄົນຂຶ້ນໄປ

20 ນາທີ

ພື້ນທີ່ໂລ່ງ

## ເກມນີ້ແມ່ນຫຍັງ?

ເກມກະຊິບໃຫ້ຈີ່ແມ່ນກິດຈະກຳສ້າງຄວາມມ່ວນຊື່ນທີ່ສອດແຊກຄວາມຮູ້ເລື່ອງສຸຂະພາບຈະເລີນພັນ. ໃນເກມນີ້, ນັກຮຽນຈະໄດ້ເຮັດກິດຈະກຳເປັນກຸ່ມ ໂດຍຜ່ານການກະຊິບຂໍ້ຄວາມຜ່ານຜູ້ຫຼິ້ນໃນທີມທີ່ໄດ້ຈັດກຽມໄວ້ແລ້ວໂດຍເພື່ອນສອນເພື່ອນ. ກຸ່ມໃດທີ່ກະຊິບຂໍ້ຄວາມໄດ້ຖືກຕ້ອງຫຼາຍກວ່າ ແລະ ໄວທີ່ສຸດແມ່ນເປັນກຸ່ມທີ່ຊະນະ.

## ເກມນີ້ສ້າງມາເພື່ອຫຍັງ?

ຈຸດປະສົງຂອງກິດຈະກຳນີ້ແມ່ນເພື່ອສ້າງຄວາມມ່ວນຊື່ນ ແລະ ທັກສະການຈື່ຈຳໃຫ້ແກ່ຜູ້ຫຼິ້ນ ແລະ ຍັງໄດ້ສ້າງຄວາມສາມັກຄີພາຍໃນກຸ່ມ. ນອກນັ້ນ, ເພື່ອນສອນເພື່ອນຍັງໄດ້ສິ່ງຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນ ຜ່ານຂໍ້ຄວາມທີ່ໃຊ້ໃນການກະຊິບໃນເກມ ແລະ ເພື່ອນສອນເພື່ອນຍັງສາມາດໃຊ້ເກມນີ້ເພື່ອແລກປ່ຽນສົນທະນາກັບນັກຮຽນກ່ຽວກັບບັນຫານັ້ນໆ.

- ເຈ້ຍສຳລັບຂຽນຂໍ້ຄວາມ (ໃຊ້ເຈ້ຍຊະນິດໃດ ຫຼື ຂະໜາດໃດກໍໄດ້)
- ບິກເຝີດ (ຖ້າບໍ່ມີໃຫ້ໃຊ້ບິກ ຫຼື ສໍ ກໍໄດ້)
- ຊຸດຂໍ້ຄວາມທີ່ຈະໃຊ້ໃນເກມ

https://youtu.be/h0ooMYcEd80

# ກິດຈະກຳນີ້ດຳເນີນແນວໃດ?

1. ເພື່ອນສອນເພື່ອນກຽມຊຸດຂໍ້ຄວາມກ່ອນການຫຼິ້ນເກມ. (ທ່ານສາມາດເບິ່ງຊຸດຂໍ້ຄວາມຕົວຢ່າງໄດ້ທີ່ເອກະສານຕິດຄັດ ຫຼື ສ້າງຊຸດປະໂຫຍກຂອງຕົນຕາມຄວາມເໝາະສົມຂອງຫົວຂໍ້ ແລະ ການແນະນຳຈາກຄູ່ມືນີ້)

2. ຂຽນຂໍ້ຄວາມໃສ່ເຈ້ຍເປົ່າດ້ວຍຂໍ້ຄວາມດຽວກັນຈຳນວນ 2 ໃບ. ຕົວຢ່າງ: "ການມີປະຈຳເດືອນເປັນເລື່ອງປົກກະຕິຂອງແມ່ຍິງ, ເວລາມີປະຈຳເດືອນຈະມີອາການເຈັບທ້ອງ"

3. ການກະກຽມຈຳນວນຂອງປະໂຫຍກ ແລະ ຄວາມຍາວຂອງປະໂຫຍກແມ່ນອີງໃສ່ຈຳນວນຂອງນັກຮຽນ ແລະ ເວລາໃຫ້ເໝາະສົມ, ເປັນໄປໄດ້ທີ່ 1 ຂໍ້ຄວາມຈະມີຫຼາຍກວ່າ 1 ປະໂຫຍກ ແລະ ຂໍ້ຄວາມສາມາດຍາວ ຫຼື  ສັ້ນກໍໄດ້ຕາມຄວາມເໝາະສົມຂອງກຸ່ມອາຍຸນັກຮຽນ.

4. ກ່ອນອື່ນໝົດ ເພື່ອນສອນເພື່ອນຕ້ອງແບ່ງຜູ້ຫຼິ້ນທັງໝົດອອກເປັນສອງທີມເທົ່າໆກັນຕາມຈຳນວນຂອງຜູ້ຫຼິ້ນ. ແລ້ວໃຫ້ນັກຮຽນແຕ່ລະກຸ່ມຈັດແຖວເປັນແຖວຕັ້ງ.

5. ຫຼັງຈາກແຕ່ລະທີມໄດ້ຜູ້ຫຼິ້ນຄົບຕາມຈຳນວນແລ້ວ, ຂໍໃຫ້ຜູ້ຫຼິ້ນທີ່ຢູ່ຫຼັງສຸດຂອງແຕ່ລະທີມຍ່າງອອກມາອ່ານຂໍ້ຄວາມໃນເຈ້ຍ ແລະ ຈື່ໃຫ້ໄດ້ພາຍໃນ 1 ນາທີ.

6. ເມື່ອໝົດເວລາ, ເພື່ອນສອນເພື່ອນໃຫ້ສັນຍານ ແລ້ວອາສາສະໝັກຕ້ອງແລ່ນກັບໄປປະຈຳທີ່ຂອງຕົນແລ້ວກະຊິບຂໍ້ຄວາມໃສ່ຫູຜູ້ທີ່ຢູ່ຕໍ່ຈາກເຮົາ, ຈາກນັ້ນຄົນທີ່ຢູ່ຕໍ່ເຮົາກໍກະຊິບຂໍ້ຄວາມໃສ່ຫູຜູ້ທີ່ຢືນຖັດໄປ, ເຮັດຕໍ່ໄປເລື້ອຍໆຈົນກວ່າຈະຮອດຄົນສຸດທ້າຍ.

7. ເມື່ອຂໍ້ຄວາມມາຮອດຄົນສຸດທ້າຍຂອງແຖວແລ້ວນັ້ນ, ຜູ້ຫຼິ້ນຄົນນັ້ນຕ້ອງເອົາຂໍ້ຄວາມທີ່ໄດ້ຮັບມາຂຽນລົງໄປໃນເຈ້ຍແລ້ວຍົກມືຂຶ້ນເພື່ອເປັນສັນຍານບອກວ່າທີມຂອງຕົນເອງສຳເລັດແລ້ວ.

8. ໃຫ້ນັກຮຽນອ່ານຂໍ້ຄວາມສູ່ໝູ່ທຸກຄົນຟັງ ແລ້ວໃຫ້ນັກຮຽນຊ່ວຍກັນຕອບວ່າກຸ່ມໃດເປັນຜູ້ຊະນະ.

9. ເພື່ອນສອນເພື່ອນນຳພານັກຮຽນສົນທະນາ ແລະ ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບຂໍ້ຄວາມນັ້ນໆ.
ຕົວຢ່າງ: "ການມີປະຈຳເດືອນເປັນເລື່ອງປົກກະຕິຂອງແມ່ຍິງ, ເວລາມີປະຈຳເດືອນຈະມີອາການເຈັບທ້ອງ"
ນັກຮຽນຄົນໃດເຄີຍມີອາການເຫຼົ່ານີ້ບໍ່?
ເຮົາມີວິທີຮັບມືກັບມັນແນວໃດ?






## ຕົວຢ່າງຊຸດປະໂຫຍກ:

1. ໜ້າເອິກຂ້ອຍເລີ່ມມີການປ່ຽນແປງ, ບາງເທື່ອມັນເຈັບຮຸນແຮງ ແລະ ມັນໃຫຍ່ຜິດສຳແດງ.
2. ເມື່ອອາກາດຮ້ອນເຮັດໃຫ້ໜ້າຂ້ອຍມັນ, ຂີ້ຝຸ່ນອຸດຕັນ ເຮັດໃຫ້ຂ້ອຍມີສິວ.



## ການສ້າງຂໍ້ຄວາມ:

ເມື່ອເພື່ອນສອນເພື່ອນ ຕ້ອງການສ້າງຂໍ້ຄວາມເພີ່ມເຕີມໃນຫົວຂໍ້ອື່ນໆສາມາດເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່ບັດຂໍ້ມູນ ໂດຍນຳໃຊ້ຕາຕະລາງສ້າງຂໍ້ຄວາມ.

With support from
Finland's development
cooperation

PLAN INTERNATIONAL